ມາດຕະຖານແຫ່ງຊາດ ສຳລັບການແກ້ໄຂບັນຫາລະເບີດບໍ່ທັນແຕກ

ທີ່ຕົກຄ້າງຢູ່ ສປປ ລາວ

# ບົດທີ 10

# ການເກັບກູ້ລະເບີດບໍ່ທັນແຕກ ໂດຍການ ນຳໃຊ້ກົນຈັກ

ຄະນະກຳມະການຄຸ້ມຄອງແຫ່ງຊາດ (ຄຄຊ) ກ່ຽວກັບ

ການແກ້ໄຂບັນຫາລະເບີດບໍ່ທັນແຕກທີ່ຕົກຄ້າງຢູ່ ສປປ ລາວ

8 ມັງກອນ 2009

# ສາລະບານ

ສາລະບານ........................................2
ບັນທຶກການດັດແກ້ ........................................4
1. ບົດນຳ........................................5
2. ຂອບເຂດ........................................5
3. ຂອບເຂດການປະຕິບັດງານເກັບກູ້ລະເບີດຂອງກົນຈັກຢູ່ ສປປ ລາວ........................................5
4. ຂໍ້ກຳນົດລວມ........................................6
4.1. ການທົດສອບ ແລະ ປະເມີນ ........................................7
4.2. ການອອກແບບ, ພັດທະນາ ແລະ ດຳເນີນການທົດສອບ ແລະ ປະເມີນຜົນ ........................................7
5. ຄວາມຕ້ອງການຂອງການເກັບກູ້ ........................................8
5.1. ຄວາມເລິກຂອງການເກັບກູ້........................................8
5.2. ເນື້ອທີ່ດິນທີ່ຈະຖືກເກັບກູ້ ........................................9
5.3. ຄຸນນະພາບຂອງການເກັບກູ້ ........................................9
6. ຄວາມປອດໄພ........................................9
6.1. ໄລຍະຫ່າງຄວາມປອດໄພ ........................................9
6.2. ການປະຕິບັດທາງດ້ານການແພດ ........................................10
6.3. ການສື່ສານ ........................................10
6.4. ໄພອັນຕະລາຍທີ່ບໍ່ໄດ້ຄາດຄະເນໄວ້ ........................................10
6.5. ຂໍ້ລະວັງຄວາມປອດໄພທົ່ວໄປ ........................................10
7. ລະບຽບການກ່ຽວກັບກົນຈັກ ........................................11
7.1. ຂໍ້ກຳນົດທົ່ວໄປ........................................11
7.2. ຂໍ້ກຳນົດເບື້ອງຕົ້ນ ........................................12
7.3. ການຄວບຄຸມ ແລະ ການບັນຊາ........................................12
7.4. ອັນຕະລາຍຈາກ ລບຕ ຫຼື ຈາກສິ່ງອື່ນໆ ........................................13
7.5. ການກະກຽມພື້ນທີ່ດິນ........................................14
7.6. ການເກັບກູ້ລະເບີດບໍ່ທັນແຕກດ້ວຍກົນຈັກ........................................14
7.7. ມາດຕະການປະຕິບັດຕໍ່ກັບຄວາມຜິດພາດຂອງກົນຈັກ........................................14

8. ການເວນຍາມ......15
9. ການປ້ອງກັນຊັບສິນ ແລະ ໂຄງລ່າງພື້ນຖານຕ່າງໆ......15
10. ການທຳລາຍ ລບຕ......15
11. ມາດຕະການປ້ອງກັນ ແລະ ການປະຕິບັດໃນເວລາເກີດໄຟໄໝ້ເຄື່ອງຈັກ......16
12. ການບຳລຸງຮັກສາ ແລະ ການສ້ອມແປງ......16
13. ບົດບັນທຶກການປະຕິບັດງານຂອງກົນຈັກ......17
14. ຂໍ້ກຳນົດອື່ນໆ......18

## ບັນທຶກການດັດແກ້

### ການຄຸ້ມຄອງການດັດແກ້ມາດຕະຖານແຫ່ງຊາດກ່ຽວກັບການປະຕິບັດງານດ້ານລະເບີດແຫ່ງ ສປປ ລາວ

ມາດຕະຖານແຫ່ງຊາດກ່ຽວກັບການປະຕິບັດງານດ້ານລະເບີດບໍ່ທັນແຕກຕົກຄ້າງ ຈະມີການທົບທວນຄືນເປັນທາງການ 3 ປີຕໍ່ຄັ້ງ. ຖ້າຫາກມີຄວາມຈຳເປັນກໍ່ສາມາດທົບທວນກ່ອນກຳນົດໄດ້ ເປັນຕົ້ນແມ່ນບັນຫາກ່ຽວກັບຄວາມປອດໄພ ແລະ ປະສິດທິພາບຂອງການປະຕິບັດງານ ຫຼື ສຳລັບຈຸດປະສົງເພື່ອດັດແກ້ໃຫ້ແທດເໝາະກັບສະພາບການຕົວຈິງໃນປະຈຸບັນ. ຖ້າມີການດັດແກ້ແມ່ນໃຫ້ໃສ່ເລກທີ, ວັນທີ ແລະ ລາຍລະອຽດຂອງການດັດແກ້ໃສ່ໃນຕາຕະລາງທີ່ກຳນົດຢູ່ລຸ່ມນີ້.

ເມື່ອສຳເລັດການທົບທວນມາດຕະຖານແຫ່ງຊາດກ່ຽວກັບການປະຕິບັດງານດ້ານລະເບີດບໍ່ທັນແຕກຕົກຄ້າງ ຢ່າງເປັນທາງການແລ້ວ ກໍ່ຈະໄດ້ເຜີຍແຜ່ໃຫ້ນຳໃຊ້. ຂໍ້ດັດແກ້ຕ່າງໆທີ່ມີຢູ່ໃນສະບັບດັດແກ້ກ່ອນໜ້ານັ້ນ ຈະຕ້ອງໄດ້ລວມເຂົ້າໄວ້ໃນສະບັບດັດແກ້ໃໝ່ເລີຍ ແລະ ໃຫ້ລຶບອອກຈາກຕາຕະລາງບັນທຶກການດັດແກ້. ຈາກນັ້ນ ກໍໃຫ້ເລີ່ມຕັ້ງຕົ້ນບັນທຶກການດັດແກ້ໃໝ່ຈົນກວ່າຈະມີການທົບທວນຄືນໃນຄັ້ງຕໍ່ໄປອີກ.

| ເລກທີ | ວັນທີ | ລາຍລະອຽດການດັດແກ້ |
|---|---|---|
| | | |
| | | |
| | | |
| | | |
| | | |
| | | |
| | | |
| | | |
| | | |
| | | |

## 1. ບົດນຳ

ການນຳໃຊ້ເຄື່ອງຈັກເຂົ້າໃນການປະຕິບັດງານເກັບກູ້ລະເບີດບໍ່ທັນແຕກ ສາມາດເຮັດໃຫ້ອັດຕາສ່ວນຂອງຜົນຜະລິດຂະຫຍາຍຕົວເພີ່ມຂຶ້ນຢ່າງໃຫຍ່ຫຼວງ, ຫຼຸດຜ່ອນເວລາໃນການປະຕິບັດງານ ແລະ ອາດເຮັດໃຫ້ຄ່າໃຊ້ຈ່າຍທັງໝົດຂອງການປະຕິບັດງານເກັບກູ້ພື້ນທີ່ໆມີລະເບີດບໍ່ທັນແຕກຫຼຸດລົງ. ແຕ່ການນຳໃຊ້ເຄື່ອງຈັກຈະຕ້ອງມີການບໍລິຫານຄຸ້ມຄອງດ້ວຍຄວາມເອົາໃຈໃສ່ ເພື່ອຮັບປະກັນໃຫ້ເຄື່ອງຈັກ ແລະ ອຸປະກອນເຄື່ອງມືທີ່ນຳມາໃຊ້ມີຄວາມເໝາະສົມກັບສະພາບຂອງການປະຕິບັດງານ, ມີການຄວບຄຸມຢ່າງລະມັດລະວັງ ແລະ ມີການນຳໃຊ້ຢ່າງແທດເໝາະ ເພື່ອເຮັດໃຫ້ການປະຕິບັດງານເກັບກູ້ສາມາດດຳເນີນໄປດ້ວຍຄວາມປອດໄພ, ມີປະສິດທິຜົນ ແລະ ປະສິດທິພາບ.

ຄຄຊ ໃນຖານະທີ່ເປັນອົງການທີ່ຄຸ້ມຄອງການປະຕິບັດງານດ້ານລະເບີດບໍ່ທັນແຕກ ຢູ່ ສປປ ລາວ, ຄວາມຮັບຜິດຊອບນີ້ລວມມີທັງການສ້າງລະບຽບການສຳລັບການປະຕິບັດງານເກັບກູ້ລະເບີດບໍ່ທັນແຕກໂດຍການນຳໃຊ້ກົນຈັກ ແລະ ຮັບປະກັນ ໃຫ້ຄວາມຕ້ອງການສຳລັບການເກັບກູ້ລະເບີດໄດ້ຮັບຜົນສຳເລັດຕາມວັດຖຸປະສົງ.

## 2. ຂອບເຂດ

ມາດຕະຖານແຫ່ງຊາດບົດນີ້ ໄດ້ກວມເອົາຂໍ້ກຳນົດຕ່ຳສຸດສຳລັບການດຳເນີນການປະຕິບັດງານເກັບກູ້ລະເບີດໂດຍການນຳໄຊ້ກົນຈັກຢູ່ ສປປ ລາວ.

ຂໍ້ກຳນົດທີ່ລະບຸໃນບົດນີ້ ແມ່ນນຳໃຊ້ສຳລັບການປະຕິບັດງານຂອງກົນຈັກ ເພື່ອສະໜັບສະໜູນໃຫ້ແກ່ການປະຕິບັດງານເກັບກູ້ ລບຕ, ຂໍ້ກຳນົດເຫຼົ່ານີ້ບໍ່ໄດ້ນຳໃຊ້ສຳລັບການເກັບກູ້ກັບລະເບີດຝັງດິນດ້ວຍກົນຈັກ.

## 3. ຂອບເຂດການປະຕິບັດງານເກັບກູ້ລະເບີດຂອງກົນຈັກຢູ່ ສປປ ລາວ

ການປະຕິບັດງານຂອງກົນຈັກອາດຈະກ່ຽວພັນກັບເຄື່ອງຈັກແຕ່ລະໜ່ວຍທີ່ນຳໃຊ້ກັບອຸປະກອນເຄື່ອງມືອັນດຽວ, ເຄື່ອງຈັກແຕ່ລະໜ່ວຍທີ່ສາມາດປະກອບໄດ້ກັບອຸປະກອນເຄື່ອງມືໄດ້ຫຼາຍຊະນິດ ຫຼື ເຄື່ອງຈັກຈຳນວນໜຶ່ງທີ່ສາມາດນຳໃຊ້ໄດ້ກັບເຄື່ອງມືຫຼາຍຊະນິດ. ຖ້າມີການນຳໃຊ້ອຸປະກອນເຄື່ອງມືເປັນຊຸດ ອຸປະກອນເຄື່ອງມືເປັນຊຸດທີ່ນຳໃຊ້ນັ້ນ ຈະຖືກຮຽກວ່າ ‘ລະບົບກົນຈັກ’.

ຄຳວ່າ ‘ເຄື່ອງຈັກ’ ໝາຍເຖິງໜ່ວຍຂອງອຸປະກອນກົນຈັກ ທີ່ນຳໃຊ້ເຂົ້າໃນການປະຕິບັດງານເກັບກູ້ ລບຕ.

ໝາຍເຫດ: 1. ຄຳວ່າ ‘ເຄື່ອງຈັກ’ ທີ່ນຳໃຊ້ໃນມາດຕະຖານແຫ່ງຊາດບົດນີ້ ກໍໃຫ້ຖືວ່າແມ່ນສ່ວນໜຶ່ງທີ່ລວມຢູ່ໃນ ‘ລະບົບກົນຈັກອີກດ້ວຍ’.

2. ຂໍ້ກຳນົດໃນບົດນີ້ ບໍ່ໄດ້ນຳໃຊ້ກັບ ເຄື່ອງຈັດຕັດຫຍ້າຂະໜາດນ້ອຍທີ່ໃຊ້ຄົນຫິ້ວ.

ເຄື່ອງຈັກຕ່າງໆທີ່ກ່ຽວຂ້ອງກັບການປະຕິບັດງານເກັບກູ້ຢູ່ ສປປ ລາວ ອາດຈະປະຕິບັດ 2 ບົດບາດຕົ້ນຕໍຄື:

ກ. ກະກຽມສະໜາມ. ເຄື່ອງຈັກປະເພດນີ້ ຈະໄດ້ນຳໃຊ້ເພື່ອຫຼຸດຜ່ອນ ຫຼື ເຄື່ອນຍ້າຍສິ່ງກີດຂວາງຕ່າງໆທີ່ເປັນອຸປະສັກຕໍ່ການເກັບກູ້ລະເບີດໃນພື້ນທີ່ດິນທີ່ມີລະເບີດຕົກຄ້າງ. ເພື່ອເຮັດໃຫ້ຂະບວນການໃນການເກັບກູ້ລະເບີດສາມາດປະຕິບັດໄດ້ໄວຂຶ້ນ ແລະ ມີຄວາມປອດໄພ. ການກະກຽມສະໜາມເກັບກູ້ລວມມີ:

(1) ຕັດ ແລະຖາງຫຍ້າ ຫຼື ພືດພັນຕ່າງໆ.

(2) ເຄື່ອນຍ້າຍເສດໂລຫະທີ່ຕົກຄ້າງອອກຈາກເນື້ອທີ່ດິນ ກ່ອນການເກັບກູ້.

(3) ເຄື່ອນຍ້າຍສິ່ງກີດຂວາງຕ່າງໆເຊັ່ນ: ສາຍລວດ, ກ້ອນຫີນຂະໜາດໃຫຍ່, ກອງຫີນ/ດິນຈີ່ ແລະ ອື່ນໆ.

ຂ. ການເກັບກູ້ລະເບີດດ້ວຍກົນຈັກ. ເຄື່ອງຈັກທີ່ຈະນຳໃຊ້ເຂົ້າໃນການທຳລາຍ ຫຼື ທັບມ້າງ ລບຕ ໃນສະຖານທີ່ມີລະເບີດຕົກຄ້າງ ຫຼື ເຄື່ອນຍ້າຍອອກຈາກພື້ນທີ່ດິນທີ່ມີລະເບີດຕົກຄ້າງ. ຈຸດປະສົງຂອງການເກັບກູ້ ລບຕ ດ້ວຍກົນຈັກ ກໍເພື່ອຈະເກັບກູ້ລູກລະເບີດອອກຈາກເນື້ອທີ່ດິນໃຫ້ຫຼາຍເທົ່າທີ່ຈະເປັນໄປໄດ້ ເພື່ອຫຼຸດຜ່ອນການເກັບກູ້ທີ່ຕ້ອງປະຕິບັດພາຍຫຼັງການປະຕິບັດງານຂອງກົນຈັກໃຫ້ໜ້ອຍລົງ. ການເກັບກູ້ພາຍຫຼັງການປະຕິບັດງານຂອງກົນຈັກອາດມີຄວາມຈຳເປັນ ເພື່ອກວດກາຄືນ ລບຕ ຊຶ່ງອາດຈະຫຼົງເຫຼືອ/ຕົກຄ້າງຈາກການປະຕິບັດງານຂອງກົນຈັກ.

ເຄື່ອງຈັກອາດຈະນຳໃຊ້ປະຕິບັດໜ້າວຽກອື່ນນຳອີກ ເພື່ອສະໜັບສະໜູນໃຫ້ແກ່ການປະຕິບັດງານເກັບກູ້ລະເບີດ. ໜ້າວຽກດັ່ງກ່າວລວມມີ: ກະກຽມເສັ້ນທາງເຂົ້າໄປຫາສະຖານປະຕິບັດການເກັບກູ້ລະເບີດ, ຊ່ວຍຂຸດດິນບ່ອນທີ່ສົງໃສວ່າມີລະເບີດບໍ່ທັນແຕກຢູ່ ຫຼື ຂຸດຂຸມເພື່ອເຮັດ ເປັນບ່ອນທຳລາຍລະເບີດ.

## 4. ຂໍ້ກຳນົດລວມ

ຂໍ້ກຳນົດລວມທີ່ນຳໃຊ້ສຳລັບທຸກການປະຕິບັດງານເກັບກູ້ລະເບີດດ້ວຍກົນຈັກ ທີ່ດຳເນີນຢູ່ ສປປ ລາວ ມີດັ່ງລຸມນີ້:

ເຄື່ອງຈັກແຕ່ລະໜ່ວຍຈະຕ້ອງໄດ້ທົດສອບ ແລະ ປະເມີນ ເພື່ອກຳນົດຄວາມເໝາະສົມຂອງເຄື່ອງຈັກ ໃນການປະຕິບັດໜ້າວຽກຢູ່ໃນສະພາບເງື່ອນໄຂບ່ອນທີ່ເຄື່ອງຈັກຈະໄດ້ນຳໄປໃຊ້. ຫ້າມບໍ່ໃຫ້ນຳໃຊ້ເຄື່ອງຈັກເຂົ້າໃນການປະຕິບັດໜ້າວຽກ ຫຼື ໃນເງື່ອນໄຂໃດກໍຕາມ ທີ່ເຄື່ອງຈັກບໍ່ໄດ້ຖືກທົດສອບ ແລະ ປະເມີນ.

ໝາຍເຫດ: ຜົນຂອງການທົດສອບ ແລະ ປະເມີນ ທີ່ຈັດຕັ້ງປະຕິບັດໃນໂຄງການອື່ນ ຫຼື ທີ່ໄດ້ເຮັດການທົດສອບ ທີ່ເຫັນວ່າມີຄວາມເໝາະສົມກັບສະພາບການປະຕິບັດງານ ຢູ່ ສປປ ລາວ ກໍສາມາດນຳໃຊ້ໄດ້.

ລະບຽບການປະຕິບັດງານສຳລັບເຄື່ອງຈັກແຕ່ລະໜ່ວຍຈະຕ້ອງສ້າງຂຶ້ນ ແລະ ຕ້ອງໄດ້ຮັບການອະນຸມັດຈາກ ຄຄຊ ກ່ອນຈະນຳໄປຈັດຕັ້ງປະຕິບັດໄດ້. ລະບຽບການເຫຼົ່ານີ້ ຈະກວມເອົາທັງລະບຽບການທົ່ວໄປສຳລັບການປະຕິບັດງານຂອງກົນຈັກ, ລະບຽບການສະເພາະສຳລັບເຄື່ອງຈັກແຕ່ລະໜ່ວຍ ແລະ ຖ້າຈຳເປັນ ກໍໃຫ້ລວມເອົາລະບຽບການໃນການນຳເອົາເຄື່ອງຈັກເກັບກູ້ລະເບີດປະຕິບັດຮ່ວມກັບວິທີການເກັບກູ້ລະເບີດແບບອື່ນນຳ.

ຫ້າມນຳໃຊ້ເຄື່ອງຈັກໃດໜຶ່ງເຂົ້າໃນການປະຕິບັດງານເກັບກູ້ລະເບີດຢູ່ ສປປ ລາວ ຖ້າບໍ່ປະຕິບັດໃຫ້ສອດຄ່ອງກັບຂໍ້ກຳນົດໃນຂໍ້ນີ້ ແລະ ບໍ່ໄດ້ຮັບອະນຸມັດຈາກ ຄຄຊ. ຖ້າເຫັນວ່າຈຳເປັນ ຄຄຊ ອາດຈະກຳນົດບາງຂໍ້ຫ້າມ ຫຼື ຂໍ້ຈຳກັດ ສຳລັບການນຳໃຊ້ເຄື່ອງເຂົ້າໃນການເກັບກູ້.

**4.1. ການທົດສອບ ແລະ ປະເມີນ**

ຖ້າເຄື່ອງຈັກໄດ້ຖືກທົດສອບ ແລະ ປະເມີນໃນສະຖານທີ່ແຫ່ງອື່ນ, ການທົດສອບ ແລະ ປະເມີນເພື່ອຢັ້ງຢືນ ຫຼື ໃນການທົດສອບເບື້ອງຕົ້ນ ສະແດງໃຫ້ເຫັນວ່າເຄື່ອງຈັກມີປະໂຫຍດຕໍ່ໂຄງການກ່ຽວຂ້ອງ, ເຮັດໃຫ້ການປະຕິບັດງານມີປະສິດທິພາບ ເມື່ອເປັນເຊັ່ນນັ້ນ ການທົດສອບ ແລະ ປະເມີນ ຢ່າງເປັນທາງການບໍ່ຈຳເປັນຕ້ອງປະຕິບັດ ແລະຄວນອະນຸຍາດໃຫ້ເຄື່ອງຈັກນັ້ນສັບຊ້ອນເຂົ້າໃນການປະຕິບັດງານໄດ້.

ການປະຕິບັດດັ່ງກ່າວແມ່ນອະນຸຍາດໃຫ້ປະຕິບັດໄດ້ ແຕ່ອົງການເກັບກູ້ຈະຕ້ອງຕິດຕາມກວດກາການປະຕິບັດງານຂອງກົນຈັກດັ່ງກ່າວຢ່າງຕໍ່ເນື່ອງ ແລະ ລະບຽບການປະຕິບັດງານເບື້ອງຕົ້ນຂອງການປະຕິບັດງານຂອງກົນຈັກເປັນທີ່ໜ້າເຊື່ອຖືແກ່ ຄຄຊ ວ່າ ມີມາດຕະຖານຕາມທີ່ກຳນົດ ແລະ ການເກັບກູ້ລະເບີດເພີ້ມຕື່ມຫຼັງຈາກການປະຕິບັດງານຂອງເຄື່ອງຈັກ ສາມາດບັນລຸໄດ້ຕາມມາດຕະຖານທີ່ຕ້ອງການ.

ຖ້າການປະຕິບັດງານຫາກປະຕິບັດໃນລັກສະນະທີ່ຕ້ອງມີການຕິດຕາມກວດກາ ຈະຕ້ອງມີການບັນທຶກຂໍ້ມູນການປະຕິບັດງານຢ່າງລະອຽດ ແລະ ເກັບຮັກສາໄວ້ໂດຍອົງການເກັບກູ້ລະເບີດ ໃນນັ້ນກໍໃຫ້ບັນທຶກສິ່ງທີ່ຈຳເປັນຕ້ອງການໃຫ້ປັບປຸງແປງ ເພື່ອໃຫ້ເຫດຜົນຕໍ່ການປັບປຸງແປງໃດໜຶ່ງຕໍ່ລະບຽບປະຕິບັດງານຂອງເຄື່ອງຈັກ.

**4.2. ການອອກແບບ, ພັດທະນາ ແລະ ດຳເນີນການທົດສອບ ແລະ ປະເມີນຜົນ**

ໃນການດຳເນີນການທົດສອບ ແລະ ປະເມີນເຄື່ອງຈັກ ຄວນຈະມີການອອກແບບ, ພັດທະນາ ແລະ ປະຕິບັດ ເພື່ອ:

ກ. ກຳນົດປັດໃຈຕ່າງໆ ເພື່ອໃຫ້ຮູ້ໄດ້ເງື່ອນໄຂສະພາບແວດລ້ອມການປະຕິບັດງານທີ່ເຄື່ອງຈັກສາມາດນຳໃຊ້ໄດ້ ຕາມຈຸດປະສົງຂອງເຄື່ອງຈັກ.

ຂ. ກຳນົດເງື່ອນໄຂປະຕິບັດງານທີ່ເໝາະສົມທີ່ສຸດ ສຳລັບນຳໃຊ້ເຄື່ອງຈັກເຂົ້າໃນສະພາບແວດລ້ອມຂອງການປະຕິບັດງານຕາມເປົ້າໝາຍຂອງເຄື່ອງຈັກ.

ຄ. ສຳລັບເຄື່ອງຈັກທີ່ຈະນຳໃຊ້ເຂົ້າໃນການການເກັບກູ້ ລບຕ ຕ້ອງມີການພິສູດປະສິດທິພາບຂອງເຄື່ອງຈັກໃນການທັບມ້າງ, ທຳລາຍ, ເຮັດໃຫ້ລະເບີດແຕກຂຶ້ນ ຫຼື ເຄື່ອນຍ້າຍ ລບຕ ຊະນິດຕ່າງໆອອກຈາກພື້ນທີ່ມີການຕົກຄ້າງຢູ່ໃນສະພາບແວດລ້ອມຂອງການປະຕິບັດງານທີ່ແຕກຕ່າງກັນ. ການພິສູດປະສິດທິພາບຂອງກົນຈັກຄືດັ່ງກ່າວ ຄວນປະຕິບັດກັບ ລບຕ ທີ່ເຄື່ອງຈັກໄດ້ຖືກອອກແບບ ແລະ ພັດທະນາ ເພື່ອໃຫ້ສາມາດຕ້ານທານໄດ້ຕາມການກຳນົດຂອງຜູ້ຜະລິດເທົ່ານັ້ນ.

ງ. ສຳລັບເຄື່ອງຈັກແຕ່ລະໜ່ວຍທີ່ຈະຖືກນຳໃຊ້ເຂົ້າໃນການປະຕິບັດການເກັບກູ້ລະເບີດດ້ວຍກົນຈັກ ຫຼື ເຄື່ອງຈັກຫຼາຍໜ່ວຍ ຫຼື ເຄື່ອງມືຕ່າງໆ ທີ່ນຳໃຊ້ເປັນສ່ວນໜຶ່ງຂອງລະບົບກົນຈັກ, ຈະຕ້ອງກຳນົດຄວາມສ່ຽງອັນຕະລາຍຈາກສິ່ງເສດເຫຼືອທີ່ຕົກຄ້າງຂອງ ລບຕ ເປົ້າໝາຍແຕ່ລະຊະນິດ ໃນສະພາບແວດ ລ້ອມຂອງການປະຕິບັດງານທີ່ກົນຈັກຈະປະຕິບັດ, ວິທີ ແລະ ລັກສະນະຂອງຄວາມສ່ຽງຕົກຄ້າງທີ່ ອາດຈະປະເຊີນ.

ຈ. ກຳນົດຂອບເຂດຈຳກັດໃດໜຶ່ງ ໃນການນຳໃຊ້ກົນ (ຕົວຢ່າງ: ເງື່ອນໄຂທາງດ້ານສະພາບແວດລ້ອມ ເປັນຕົ້ນແມ່ນ: ຄວາມຄ້ອຍຊັ່ງຂອງໜ້າດິນ, ຄວາມປຽກຊຸ່ມຂອງດິນ, ຄວາມແຂງຂອງດິນ, ອຸນນະພູມ ແລະ ອື່ນໆ ຫຼື ຄວາມອັນຕະລາຍສະເພາະຈາກວັດຖຸລະເບີດໃດໜຶ່ງ).

ສ. ປະເມີນ ແລະ ຢັ້ງຢືນ ຄວາມປອດໄພຂອງເຄື່ອງຈັກ ຕໍ່ຜູ້ບັນຊາຈັກ ແລະ ບຸກຄົນອື່ນໃດໜຶ່ງໃນສະໜາມເກັບກູ້ທີ່ເຄື່ອງຈັກປະຕິບັດງານຢູ່. ການປ້ອງກັນພະນັກງານເຫຼົ່ານີ້ຈາກ ຄວາມສ່ຽງອັນຕະລາຍທີ່ອາດຈະເກີດຂຶ້ນຈະຕ້ອງໄດ້ເຮັດສຳລັບແຕ່ລະເຄື່ອງຈັກສະເພາະ.

ຊ. ກຳນົດລະບຽບການປະຕິບັດງານທີ່ຕ້ອງການ ເພື່ອຮັບປະກັນໃຫ້ເຄື່ອງຈັກສາມາດປະຕິບັດງານບັນລຸໄດ້ຕາມມາດຕະຖານທີ່ກຳນົດໄວ້.

## 5. ຄວາມຕ້ອງການຂອງການເກັບກູ້

ຄວາມຕ້ອງການຂອງການເກັບກູ້ທີ່ອ້າງອີງເຖິງໃນນີ້ຂອງມາດຕະຖານແຫ່ງຊາດ ແມ່ນກ່ຽວຂ້ອງກັບການປະຕິບັດງານ**ເກັບກູ້ລະເບີດໃນພື້ນທີ່ດິນ**ເທົ່ານັ້ນ. ຄວາມຕ້ອງການຂອງການເກັບກູ້ນີ້ບໍ່ກ່ຽວຂ້ອງກັບວຽກເກັບກູ້ທຳລາຍເຄື່ອນທີ່.

ຄວາມຕ້ອງການຂອງວຽກງານເກັບກູ້ ລວມມີລາຍລະອຽດສະເພາະເຊັ່ນ: ຄວາມເລິກຂອງການເກັບກູ້, ບໍລິເວນທີ່ໆຈະທຳການເກັບກູ້ ແລະ ຄຸນນະພາບຂອງການເກັບກູ້.

ຄວາມຕ້ອງການຂອງການເກັບກູ້ ຄວນຈະກຳນົດໃຫ້ໂດຍເຈົ້າໜ້າທີ່ຜູ້ຈັດສັນວຽກໂດຍອີງໃສ່ຈຸດປະສົງຂອງການໃຊ້ເນື້ອທີ່ດິນ. ແຕ່ຖ້າເຈົ້າໜ້າທີ່ຜູ້ຈັດສັນວຽກບໍ່ໄດ້ກຳນົດຄວາມຕ້ອງການຂອງການເກັບກູ້ ກໍ່ໃຫ້ນຳໃຊ້ຄວາມເລິກຂອງການເກັບກູ້ສະເລ່ຍ ແລະ ຄຸນນະພາບຂອງການເກັບກູ້ທີ່ກຳນົດໄວ້ໃນບົດນີ້ ຂອງມາດຕະຖານແຫ່ງຊາດແທນ.

ອົງການເກັບກູ້ທີ່ປະຕິບັດການເກັບກູ້ລະເບີດດ້ວຍກົນຈັກ ບໍ່ວ່າຈະເກັບກູ້ດ້ວຍກົນຈັກໂດຍສະເພາະຢ່າງດຽວ ຫຼື ໄດ້ຮັບການສະໜັບສະໜູນຈາກການເກັບກູ້ດ້ວຍວິທີການອື່ນ, ຈະຕ້ອງສ້າງວິທີການປະຕິບັດງານ ແລະ ລະບຽບການຕ່າງໆ ເພື່ອຮັບປະກັນໃຫ້ພື້ນທີ່ໆກຳນົດໄວ້ໄດ້ຖືກເກັບກູ້ຕາມຄວາມເລິກ ແລະ ຄຸນນະພາບຂອງການເກັບກູ້ທີ່ຕ້ອງການ.

ໃນກໍລະນີທີ່ອົງການເກັບກູ້ລະເບີດບໍ່ສາມາດປະຕິບັດໃຫ້ບັນລຸໄດ້ຕາມຄວາມຕ້ອງການຂອງການເກັບກູ້ ພວກເຂົາຄວນຢຸດການປະຕິບັດງານ ແລ້ວລາຍງານບັນຫາທີ່ເກີດຂຶ້ນ ໃຫ້ເຈົ້າໜ້າທີ່ຜູ້ຈັດສັນວຽກຊາບໂດຍໄວ.

### 5.1. ຄວາມເລິກຂອງການເກັບກູ້

ການກຳນົດຄວາມເລິກຂອງການເກັບແມ່ນອີງໃສ່ຈຸດປະສົງຂອງການນຳໃຊ້ເນື້ອທີ່ດິນ ແລະ ປະເພດຂອງ ລບຕ ທີ່ອາດຈະພົບ. ໃນບາງກໍລະນີ ອາດຕ້ອງການໃຫ້ເກັບກູ້ຢູ່ເທິງໜ້າດິນເທົ່ານັ້ນ. ໃນສະໜາມເກັບກູ້ໜຶ່ງ ອາດຈະກຳນົດຄວາມເລິກຂອງການເກັບກູ້ເປັນຫຼາຍລະດັບຕ່າງກັນຂອງແຕ່ລະເນື້ອທີ່ໃນສະໜາມເກັບກູ້ນັ້ນ.

ສໍາລັບການເກັບກູ້ລະເບີດໃນເນື້ອທີ່ດິນທີ່ບໍ່ໄດ້ກໍານົດຄວາມເລິກຂອງການເກັບກູ້ໃຫ້ ແມ່ນໃຫ້ນໍາໃຊ້ຄວາມເລິກສະເລ່ຍເຂົ້າໃນການເກັບກູ້ເລີຍ. **ຄວາມເລິກສະເລ່ຍຂອງການເກັບກູ້ທີ່ນໍາໃຊ້ຢູ່ ສປປ ລາວ ແມ່ນ 25 ຊັງຕີແມັດ.**

ໝາຍເຫດ: ຄວາມເລິກສະເລ່ຍແມ່ນອີງໃສ່ການນໍາໃຊ້ເນື້ອທີ່ດິນໂດຍທົ່ວໄປພາຍຫຼັງເກັບກູ້ແລ້ວ ເຊັ່ນ ການປູກເຂົ້າ. ຄວາມເລິກແມ່ນອີງໃສ່ການຄາດຄະເນຄວາມສາມາດສູງສຸດທີ່ອຸປະກອນທີ່ໃຊ້ຂຸດ ແລະ ໄຖ ສາມາດຂຸດ ຫຼື ໄຖເລິກລົງໄປໃນດິນໄດ້.

## 5.2. ເນື້ອທີ່ດິນທີ່ຈະຖືກເກັບກູ້

ການປະຕິບັດງານເກັບກູ້ລະເບີດຢູ່ ສປປ ລາວ ຈະພິຈາລະນາສະເພາະເນື້ອທີ່ດິນທີ່ຈະມີການນໍາໃຊ້ພາຍໃນ 6 ເດືອນ ພາຍຫຼັງສໍາເລັດການເກັບກູ້. ຖ້າເນື້ອທີ່ດິນທີ່ຈະນໍາໃຊ້ຫາກຮູ້ຈັກ ສະນັ້ນ ພື້ນທີ່ດິນດັ່ງກ່າວຄວນສາມາດກໍານົດຂອບເຂດໄດ້. ການກໍານົດຂອບເຂດເນື້ອທີ່ດິນບ່ອນທີ່ຈະເກັບກູ້ຄວນກໍານົດໃນລະຫວ່າງຂັ້ນຕອນພິຈາລະນາຈັດສັນໜ້າວຽກ.

## 5.3. ຄຸນນະພາບຂອງການເກັບກູ້

ຄວາມຕ້ອງການໜ້ອຍສຸດທາງດ້ານຄຸນນະພາບ ສໍາລັບການເກັບກູ້ ລບຕ ໂດຍການນໍາໃຊ້ກົນຈັກ, ເມື່ອສໍາເລັດການເກັບກູ້ໃດໜຶ່ງ ພາຍຫຼັງການປະຕິບັດງານຂອງກົນຈັກ ເພື່ອຮັບປະກັນວ່າ:

ກ. ການເກັບກູ້ໃນເນື້ອທີ່ດິນ. ລູກລະເບີດທຸກໜ່ວຍທີ່ມີຂະໜາດເທົ່າກັບ ຫຼື ໃຫຍ່ກວ່າ ບົມບີ 26 ເຄິ່ງໜ່ວຍຈະຕ້ອງຖືກເກັບກູ້ອອກຈາກພື້ນດິນໃນລະດັບຄວາມເລິກທີ່ຕ້ອງການ ໃນເນື້ອທີ່ໆຈະທໍາການເກັບກ.

ຂ. ລະເບີດອື່ນທຸກປະເພດທີ່ນ້ອຍກວ່າ ບົມບີ 26 ເຄິ່ງໜ່ວຍ, ລວມທັງຊິ້ນສ່ວນຂອງ ລບຕ ທີ່ຍັງມີອັນຕະລາຍທີ່ພົບໃນລະຫວ່າງການປະຕິບັດງານເກັບກູ້ ລບຕ ດ້ວຍກົນຈັກ ຈະຕ້ອງເກັບກູ້ອອກຈາກເນື້ອທີ່ດິນໃຫ້ໝົດ.

ເຈົ້າໜ້າທີ່ຜູ້ຈັດສັນວຽກອາດຈະກໍານົດຄຸນນະພາບຂອງການເກັບກູ້ທີ່ເຂັ້ມງວດກ່ວາຂໍ້ກໍານົດທີ່ລະບຸໄວ້ຂ້າງເທິງກໍໄດ້.

ໝາຍເຫດ: ສໍາລັບຈະປະສົງຂອງມາດຕະຖານແຫ່ງຊາດ ເຫັນວ່າ ບົມບີ 26 ເປັນ "ລະເບີດເປົ້າໝາຍຕໍ່າສຸດ" ຊຶ່ງມີຄວາມສ່ຽງອັນຕະລາຍຕໍ່ຄົນ ຢູ່ ສປປ ລາວ.

# 6. ຄວາມປອດໄພ

## 6.1. ໄລຍະຫ່າງຄວາມປອດໄພ

ໃນລະຫວ່າງການທົດສອບ ແລະ ປະເມີນເຄື່ອງຈັກ ອີງການປະຕິບັດງານດ້ານລະເບີດບໍ່ທັນແຕກ ຈະເປັນຜູ້ກໍານົດໄລຍະຄວາມປອດໄພຕໍ່າສຸດສໍາລັບເຄື່ອງຈັກແຕ່ລະໜ່ວຍ ບົນພື້ນຖານເນື້ອທີ່ໆມີອັນຕະລາຍສູງສຸດທີ່ຕິດພັນກັບການປະຕິບັດງານຂອງເຄື່ອງຈັກ. ໃນການພິຈາລະນາໄລຍະຄວາມປອດໄພແມ່ນໃຫ້ຄໍານຶງເຖິງການລະເບີດຂອງ ລບຕ, ການພົ້ງກະເດັນໄປຂອງຫີນ ແລະ ວັດຖຸອື່ນໆຈາກເຄື່ອງຈັກ, ການພົ້ງອອກຂອງຊິ້ນສ່ວນເຄື່ອງຈັກ. ເຄື່ອງຈັກທີ່ບັນຊາໃນໄລຍະໄກ ຊຶ່ງນໍາໃຊ້ສູນບັນຊາທີ່ມີເຄື່ອງປ້ອງກັນ ການກໍານົດໄລຍະຫ່າງຄວາມປອດໄພແມ່ນໃຫ້ກໍານົດທັງກໍລະນີທີ່ບັນຊາຈາກສູນທີ່ມີສິ່ງປ້ອງກັນ ແລະ ກໍລະນີທີ່ບັນຊາໂດຍບໍ່ນໍາໃຊ້ສິ່ງປ້ອງກັນ.

ໄລຍະຫ່າງຄວາມປອດໄພຕ່ຳສຸດ ແມ່ນໃຫ້ກຳນົດໄວ້ໃນລະບຽບການປະຕິບັດງານດ້ວຍກົນຈັກນຳ.

ຖ້າການປະຕິບັດງານເກັບກູ້ລະເບີດດ້ວຍກົນຈັກຫາກປະຕິບັດຮ່ວມກັບວິທີການເກັບກູ້ອື່ນ ໄລຍະຫ່າງຄວາມປອດໄພຕ້ອງໄດ້ຂະຫຍາຍອອກໃຫ້ໄກຂຶ້ນຕື່ມ.

ໃນຂະນະທີ່ເຄື່ອງຈັກກຳລັງປະຕິບັດວຽກງານຢູ່ນັ້ນ ຫ້າມບໍ່ໃຫ້ບຸກຄົນໃດໜຶ່ງເຄື່ອນໄຫວໄປມາຢູ່ພາຍໃນໄລຍະຄວາມປອດໄພຕ່ຳສຸດຂອງເຄື່ອງຈັກ ບໍ່ວ່າບຸກຄົນດັ່ງກ່າວຈະໃສ່ຊຸດອຸປະກອນປ້ອງກັນຕົວ ຫຼື ບໍ່ກໍຕາມ.

### 6.2. ການປະຕິບັດທາງດ້ານການແພດ

ແຜນການຕອບສະໜອງແກ້ໄຂອຸປະຕິເຫດສຳລັບການປະຕິບັດງານເກັບກູ້ລະເບີດດ້ວຍກົນຈັກ ໃຫ້ລວມເອົາວິທີປະຕິບັດໃນການນຳເອົາຜູ້ບາດເຈັບອອກຈາກເຄື່ອງຈັກເຂົ້ານຳ. ວິທີການປະຕິບັດດັ່ງກ່າວ ແມ່ນໃຫ້ກຳນົດສຳລັບເຄື່ອງຈັກແຕ່ລະຊະນິດ ແລະ ອຸປະກອນພິເສດໃດໜຶ່ງທີ່ຈຳເປັນຕ້ອງມີປະຈຳຢູ່ໃນສະໜາມ.

ທຸກສະໜາມເກັບກູ້ທີ່ນຳໃຊ້ກົນຈັກເພື່ອປະຕິບັດການເກັບກູ້ ຈະຕ້ອງມີນັກວິຊາການເກັບ ກູ້ທີ່ມີຄຸນວຸດທິຢ່າງໜ້ອຍ 2 ຄົນ (ພ້ອມທັງຜູ້ຊີ້ນຳ ແລະ ແພດສະໜາມນຳ) ປະຈຳຢູ່ສະໜາມຕະຫຼອດເວລາທີ່ເຄື່ອງຈັກປະຕິບັດງານ. ໃນກໍລະນີສຸກເສີນນັກວິຊາການເກັບກູ້ເຫຼົ່ານີ້ ຈະຊ່ວຍໃນການເອົາຜູ້ບາດເຈັບອອກຈາກເຄື່ອງຈັກຕາມຄວາມຕ້ອງການ.

ໝາຍເຫດ: ນັກວິຊາການເກັບກູ້ເຫຼົ່ານີ້ ຄວນຈະປະຕິບັດໜ້າທີ່ອື່ນນຳອີກ ເປັນຕົ້ນແມ່ນ: ກວດກາຫາລູກລະເບີດທີ່ອາດຈະຕິດມານຳເຄື່ອງຈັກ ແລະ ເຝົ້າລະວັງເບິ່ງວັດຖຸທີ່ພົ້ງກະເດັນອອກ ໃນເວລາເຄື່ອງຈັກປະຕິບັດງານ.

### 6.3. ການສື່ສານ

ເຄື່ອງຈັກຊະນິດທີ່ມີຜູ້ຄວບຄຸມຢູ່ພາຍໃນທີ່ປະຕິບັດການເກັບກູ້ລະເບີດ ຈະຕ້ອງມີວິທະຍຸເພື່ອຕິດຕໍ່ສື່ສານກັບຜູ້ຊີ້ນຳການເກັບກູ້ຕະຫຼອດເວລາ ໃນຂະນະທີ່ປະຕິບັດງານ.

### 6.4. ໄພອັນຕະລາຍທີ່ບໍ່ໄດ້ຄາດຄະເນໄວ້

ຖ້າວ່າໃນລະຫວ່າງການປະຕິບັດງານເກັບກູ້ລະເບີດດ້ວຍກົນຈັກ ຫາກພົບ ຫຼື ສົງໃສກ່ຽວກັບຄວາມອັນຕະລາຍໃດໜຶ່ງ ຊຶ່ງເຄື່ອງຈັກບໍ່ໄດ້ອອກແບບ ຫຼື ບໍ່ໄດ້ຮັບອະນຸຍາດໃຫ້ປະຕິບັດກັບຄວາມອັນຕະລາຍນັ້ນ. ບັນຫາດັ່ງກ່າວຈະຕ້ອງລາຍງານໃຫ້ຜູ້ຊີ້ນຳຊາບ ແລະ ຖອນເຄື່ອງຈັກໄປໄວ້ສະຖານທີ່ປອດໄພ ພ້ອມທັງແຈ້ງໃຫ້ຜູ້ຈັດສັນໜ້າວຽກຊາບ. ຂໍ້ກຳນົດນີ້ໃຫ້ນຳໃຊ້ກັບສິ່ງທີ່ເປັນອັນຕະລາຍ ທີ່ຢູ່ນອກພື້ນທີ່ປະຕິບັດງານດ້ວຍກົນຈັກນຳດ້ວຍ.

### 6.5. ຂໍ້ລະວັງຄວາມປອດໄພທົ່ວໄປ

ຂໍ້ຄວນລະວັງຄວາມປອດໄພທົ່ວໄປທີ່ທຸກອົງການເກັບກູ້ລະເບີດໂດຍການນຳໃຊ້ກົນຈັກ ຈະຕ້ອງປະຕິບັດມີຄື:

ກ. ຖ້າເຄື່ອງຈັກບໍ່ໄດ້ຖືກອອກແບບສຳລັບຜູ້ປະຕິບັດງານ 2 ຄົນ, ຈະມີພຽງແຕ່ຜູ້ຄວບຄຸມເຄື່ອງຈັກຄົນດຽວທີ່ສາມາດຢູ່ໃນເຄື່ອງຈັກໃນຂະນະທີ່ເຄື່ອງຈັກປະຕິບັດງານ. ມີພຽງເງື່ອນໄຂດຽວທີ່ອະນຸຍາດໃຫ້ມີ 2 ຄົນຢູ່ໃນຫ້ອງຂັບທີ່ອອກແບບສຳລັບຜູ້ບັນຊາຄົນດຽວກໍຄື ໃນກໍລະຝຶກອົບຮົມ ແລະ ການຝຶກອົບຮົມແມ່ນໃຫ້ປະຕິບັດສະເພາະໃນພື້ນທີ່ໆບໍ່ມີ ລບຕ ຄ້າງເທົ່ານັ້ນ.

ຂ. ຫ້ອງຂັບຂອງເຄື່ອງຈັກທີ່ມີການປ້ອງກັນຄວນອັດໃຫ້ແໜ້ນຕະຫຼອດເວລາທີ່ເຄື່ອງຈັກປະຕິບັດງານ.

ຄ. ຜູ້ຄວບຄຸມເຄື່ອງຈັກຕ້ອງໃສ່ສາຍຮັດນິລະໄພໄວ້ຕະຫຼອດເວລາໃນຂະນະທີ່ເຄື່ອງຈັກປະຕິບັດງານຢູ່. ລວມທັງ ການເຄື່ອນຍ້າຍເຄື່ອງຈັກໄປມາຢູ່ໃນບໍລິເວນ ຂອງສະໜາມດ້ວຍ.

ງ. ຖ້າມີການເກັບມ້ຽນເຄື່ອງຂອງໃດໜຶ່ງໄວ້ໃນຫ້ອງຂັບ ເຊັ່ນ: ເຄື່ອງມືສ້ອມແປງ, ນອົດ, ເຄື່ອງອາໄຫຼ່ຂອງກົນຈັກ ແລະ ອື່ນໆ ຕ້ອງມ້ຽນມັດໃຫ້ແໜ້ນດີ. ຖ້າມີອຸປະກອນ ຫຼື ເຄື່ອງອະໄຫຼ່ທີ່ຈຳເປັນຕ້ອງເກັບມ້ຽນໄວ້ໃນຫ້ອງຂັບຂອງເຄື່ອງຈັກ ເຄື່ອງເຫຼົ່ານັ້ນຈະຕ້ອງເກັບມ້ຽນໄວ້ໃຫ້ດີຢູ່ໃນຫ້ອງຂັບ.

ຈ. ກ່ອນຈະເລີ່ມຕົ້ນການເກັບກູ້ລະເບີດດ້ວຍກົນຈັກ ພື້ນທີ່ອັນຕະລາຍໃນການນຳໃຊ້ກົນຈັກຕ້ອງໄດ້ກວດກາກ່ອນ ເພື່ອຮັບປະກັນບໍ່ໃຫ້ມີຄົນຢູ່ໃນບໍລິເວນນັ້ນ.

ສ. ຖ້າເຄື່ອງຈັກມີການຕິດຕັ້ງເຄື່ອງສັນຍານເຕືອນດ້ວຍສຽງ ເຄື່ອງສັນຍານເຕືອນຈະຕ້ອງເປີດຂຶ້ນເພື່ອເປັນສັນຍານເຕືອນກ່ອນທີ່ກົນຈັກຈະເລີ່ມຕົ້ນປະຕິບັດວຽກ.

ຊ. ຖ້າມີການຕິດຕັ້ງເຄື່ອງສັນຍານເຕືອນປະເພດແສງໄຟກະພິບ (ແສງໄຟແມບ) ແມ່ນໃຫ້ເປີດຕະຫຼອດເວລາໃນຂະນະທີ່ກົນຈັກປະຕິບັດງານຢູ່.

## 7. ລະບຽບການກ່ຽວກັບກົນຈັກ

ອີງການເກັບກູ້ລະເບີດດ້ວຍການນຳໃຊ້ກົນຈັກ ຈະຕ້ອງສ້າງ ແລະ ພັດທະນາວິທີການປະຕິບັດງານ ແລະ ລະບຽບການຕ່າງໆ ເພື່ອຮັບປະກັນໃຫ້ຂໍ້ກຳນົດໃນຂໍ້ນີ້ ໄດ້ປະຕິບັດຢ່າງສອດຄ່ອງຕາມທີ່ກຳນົດໄວ້.

### 7.1. ຂໍ້ກຳນົດທົ່ວໄປ

ເມື່ອເຄື່ອງຈັກຖືກນຳໃຊ້ເຂົ້າໃນການເກັບກູ້ລະເບີດໂດຍການນຳໃຊ້ກົນຈັກ ແລະ ກົນຈັກນັ້ນໄດ້ຮັບການປະເມີນຜົນວ່າ ຍັງມີການຕົກຄ້າງຂອງສິ່ງທີ່ເປັນອັນຕະລາຍພາຍຫຼັງປະຕິບັດງານ, ເມື່ອເປັນແນວນັ້ນ ຈຳເປັນຕ້ອງໄດ້ປະຕິບັດການເກັບກູ້ຊ້ຳຕື່ມອີກ ເພື່ອເຄື່ອນຍ້າຍຄວາມສ່ຽງຈາກສິ່ງເສດເຫຼືອອອກ ກ່ອນທີ່ເນື້ອທີ່ດັ່ງກ່າວຈະຖືກຮັບຮອງວ່າໄດ້ເກັບກູ້ລະເບີດອອກແລ້ວ.

ຢູ່ສະຖານທີ່ໆມີການເກັບກູ້ລະເບີດດ້ວຍກົນຈັກ ພາຍຫຼັງສຳເລັດການເກັບກູ້ແລ້ວ ຕ້ອງປັບແປງດິນໃຫ້ມີຢູ່ໃນສະພາບທີ່ເໝາະສົມກັບຈຸດປະສົງຂອງການນຳໃຊ້ ຕົວຢ່າງເຊັ່ນ:

ກ. ດິນທີ່ຈະນຳໃຊ້ເພື່ອການປູກຝັງ, ພາຍຫຼັງການເກັບກູ້ສຳເລັດແລ້ວຈະຕ້ອງປົ້ນດິນຄືນ ໃຫ້ໜ້າດິນຊັ້ນເທິງກັບມາຢູ່ເທິງຄືເກົ່າ.

ຂ. ເນື້ອທີ່ດິນທີ່ເກັບກູ້ແລ້ວ ຕ້ອງບໍ່ປະໃຫ້ເປັນຂຸມເປັນຮູທີ່ເກີດຈາກການປະຕິບັດງານຂອງກົນຈັກຫຼົງເຫຼືອຢູ່.

ຄ. ບ່ອນໃດທີ່ມີການອະນາໄມຂົນຍ້າຍພືດພັນ ແລະ ວັດຊະພືດອອກຈາກໜ້າດິນໃນເວລາປະຕິບັດການເກັບກູ້ ຊຶ່ງອາດຈະເຮັດໃຫ້ດິນມີການເຊາະເຈື່ອນ. ເມື່ອສຳເລັດການເກັບກູ້ແລ້ວ ຕ້ອງໄດ້ບູລະນະຄືນເພື່ອເຮັດໃຫ້ດິນດັ່ງກ່າວມີຄວາມແໜ້ນໜາເໝືອນສະພາບເດີມກ່ອນການເກັບກູ້ດ້ວຍກົນຈັກ.

ເວລາໃດກໍຕາມ ຖ້າການປະຕິບັດງານດ້ວຍກົນຈັກຫາກພົວພັນກັບການຂຸດ ບໍ່ວ່າຈະເປັນການຂຸດຊອກຫາລະເບີດ ຫຼື ສະໜັບສະໜູນໃຫ້ແກ່ວຽກງານທຳລາຍລະເບີດ, ການຂຸດແມ່ນໃຫ້ຂຸດລົງເທື່ອລະຊັ້ນ ແລະ ໃຫ້ມີການກວດກາດ້ວຍເຄື່ອງກວດໂລຫະກ່ອນ ເພື່ອຢັ້ງຢືນວ່າມີຄວາມປອດໄພແລ້ວຈຶ່ງສືບຕໍ່ຂຸດຕໍ່ໄປອີກ. ຄວາມເລິກຂອງການຂຸດໃນແຕ່ລະຊັ້ນແມ່ນບໍ່ໃຫ້ເລິກເກີນກວ່າຄວາມເລິກທີ່ເຄື່ອງກວດສາມາດກວດໄດ້, ຖ້າເຄື່ອງກວດຈັບສັນຍານໃດໜຶ່ງໄດ້ ກໍຈະຕ້ອງເລີ່ມຂຸດດ້ວຍມືຈົນກວ່າແຫຼ່ງຂອງສັນຍານທີ່ບົ່ງຊີ້ນັ້ນໄດ້ກວດພົບ ແລະ ໄດ້ຖືກເຄື່ອນຍ້າຍອອກໄປ, ຖ້າມີການນຳໃຊ້ເຄື່ອງກວດແມ່ເຫຼັກໃນການກວດກາ ຊຶ່ງມີຄວາມເປັນໄປໄດ້ທີ່ຈະຄິດໄລ່ ແລະ ຄາດຄະເນຄວາມເລິກຂອງວັດຖຸທີ່ສືບຄົ້ນຫານັ້ນ, ແຕ່ການຂຸດດ້ວຍກົນຈັກແມ່ນບໍ່ໃຫ້ຂຸດເຖິງໜ່ວຍລະເບີດໂດຍກົງ ຄາດວ່າຍັງອີກ 01 ແມັດ ຈະເຖິງໜ່ວຍລະເບີດແມ່ນໃຫ້ຢຸດການຂຸດດ້ວຍກົນຈັກ ແລະ ໃຫ້ໃຊ້ຄົນຂຸດຕໍ່ໄປ.

ການເຄື່ອນຍ້າຍວັດຖຸ ຫຼື ສິ່ງເສດເຫຼືອທີ່ອາດຈະມີການຕົກຄ້າງຂອງລູກລະເບີດ ໃນລະຫວ່າງການປະຕິບັດງານເກັບກູ້ດ້ວຍກົນຈັກ ຈະຕ້ອງປະຕິບັດດ້ວຍວິທີການທີ່ປ້ອງກັນວັດສະດຸທີ່ຂົນຍາຍບໍ່ໃຫ້ຕົກເຮ່ຍໃສ່ເສັ້ນທາງຫຼວງ.

## 7.2. ຂໍ້ກຳນົດເບື້ອງຕົ້ນ

ໃນລະຫວ່າງການກະກຽມສະໜາມເກັບກູ້ລະເບີດດ້ວຍກົນຈັກ ມີບາງ "ຂໍ້ກຳນົດສະເພາະກ່ຽວກັບກົນຈັກ" ທີ່ຈະຕ້ອງປະຕິບັດໃຫ້ສອດຄ່ອງ. ຂໍ້ກຳນົດດັ່ງກ່າວກຳນົດໄວ້ໃນ ບົດທີ 5 ຂອງມາດຕະຖານແຫ່ງຊາດ ວ່າດ້ວຍ "ການກະກຽມສະໜາມເກັບກູ້".

ກ່ອນຈະມີການປະຕິບັດງານເກັບກູ້ລະເບີດກົນຈັກ ຈະຕ້ອງມີການກຳນົດ ແລະ ປັກໝາຍເຂດ ແດນພື້ນທີ່ໆຈະເກັບກູ້ ໂດຍໃຫ້ສອດຄ່ອງກັບຂໍ້ກຳນົດທີ່ລະບຸໄວ້ໃນ ບົດທີ 4 ຂອງມາດຕະຖານແຫ່ງຊາດ ວ່າດ້ວຍ "ລະບົບການປັກໝາຍ". ຖ້າການເກັບກູ້ ລບຕ ດ້ວຍກົນຈັກທີ່ມີຜູ້ຄວບຄຸມຢູ່ພາຍໃນ ຜູ້ຄວບຄຸມເຄື່ອງຈັກຈະຕ້ອງສາມາດເບິ່ງເຫັນໄດ້ລະບົບເຄື່ອງໝາຍຢ່າງຈະແຈ້ງ ຈາກພາຍໃນເຄື່ອງຈັກ.

ຖ້າການເກັບກູ້ລະເບີດດ້ວຍກົນຈັກ ທີ່ກ່ຽວພັນກັບການຍູ້, ຄາດ, ທ້ອນໂຮມ ຫຼື ເຄື່ອນຍ້າຍວັດສະດຸທີ່ມີ ລບຕ ຕົກຄ້າງ, ຈະຕ້ອງໄດ້ສ້າງສະຖານທີ່ໆມີຄວາມປອດໄພ ເພື່ອເປັນບ່ອນໄວ້ວັດສະດຸດັ່ງກ່າວ. ສະຖານທີ່ນີ້ຕ້ອງເຂົ້າໄປຫາໄດ້ສະດວກ ແລະ ກວ້າງພຽງພໍ ສຳລັບຈັດວາງວັດສະດຸໃຫ້ຢູ່ໃນສະພາບທີ່ເໝາະສົມ ສາມາດກວດກາໄດ້ງ່າຍ ແລະ ໃຫ້ເຄື່ອງຈັກເຄື່ອນໄຫວໄປມາໂດຍບໍ່ຕ້ອງເຄື່ອນທັບວັດສະດຸທີ່ມີ ລບຕ ຕົກຄ້າງ ແລະ ໃຫ້ສ້າງຕັ້ງຂຶ້ນຢູ່ສະຖານທີ່ໆມີໄລຍະຄວາມປອດໄພທີ່ເໝາະສົມ.

ສຳລັບການເກັບກູ້ລະເບີດດ້ວຍກົນຈັກ ຄວນສະຖານທີ່ໜຶ່ງຂຶ້ນໄກ້ກັບທາງເຂົ້າ-ອອກ ແລະ ໄກ້ກັບສະໜາມ ເພື່ອໃຊ້ເປັນສະຖານທີ່ກວດກາ ເພື່ອຮັບປະກັນວ່າບໍ່ມີ ລບຕ ຕິດມານຳເຄື່ອງຈັກ. ທີ່ຕັ້ງຂອງສະຖານທີ່ດັ່ງກ່າວແມ່ນໃຫ້ຄຳນຶງເຖິງໄລຍະຄວາມປອດໄພ ແລະ ຄວາມຕ້ອງການໃນການທຳລາຍລະເບີດ ທີ່ອາດຕິດມາກັບເຄື່ອງຈັກ.

## 7.3. ການຄວບຄຸມ ແລະ ການບັນຊາ

ການປະຕິບັດງານເກັບກູ້ລະເບີດດ້ວຍກົນຈັກ ຕ້ອງມີການວາງແຜນ ແລະ ປະຕິບັດເປັນຢ່າງດີ ເພື່ອຮັບປະກັນໃຫ້ມີການຄວບຄຸມ ແລະ ບັນຊາການປະຕິບັດງານ ສາມາດປະຕິບັດໄດ້ຢ່າງທົ່ວເຖິງ ແລະ ສາມາດໃຫ້ການຊ່ວຍເຫຼືອໃນເວລາສຸກເສີນ ໃຫ້ແກ່ການປະຕິບັດແຜນການຕອບສະໜອງການແກ້ໄຂອຸປະຕິເຫດ ແລະ ການກອບກູ້ເອົາເຄື່ອງຈັກ. ການປະຕິບັດດີດັ່ງກ່າວ ອາດໝາຍເຖິງການຈຳກັດຂະໜາດຂອງພື້ນທີ່ປະຕິບັດງານໃຫ້ແຄບເຂົ້າ.

ລະບຽບການຕ່າງໆຕ້ອງຮັບປະກັນຄວາມປອດໄພຂອງພະນັກງານ ທີ່ປະຕິບັດໜ້າທີ່ໃນການບັນຊາ ຫຼື ຊ່ວຍໃນການປະຕິບັດງານຂອງກົນຈັກ.

## 7.4. ອັນຕະລາຍຈາກ ລບຕ ຫຼື ຈາກສິ່ງອື່ນໆ

ຂໍ້ກຳນົດທີ່ຈະຕ້ອງປະຕິບັດ ທີ່ກ່ຽວກັບຄວາມອັນຕະລາຍຈາກ ລບຕ ແລະ ຈາກສິ່ງອື່ນໆ ທີ່ພົບໃນລະຫວ່າງການປະຕິບັດງານ ມີດັ່ງນີ້:

ກ. ກຳນົດລະອຽດມາດຕະການທີ່ຈະຜູ້ຄວບຄຸມກົນຈັກ ແລະ ຜູ້ຊີ້ນຳນການເກັບກູ້ຈະຕ້ອງປະຕິບັດ ໃນເວລາພົບເຫັນລະເບີດໃນລະຫວ່າງການປະຕິບັດງານ ບໍ່ວ່າຈະດ້ວຍ ການລະເບີດ ຫຼື ສັງເກດເຫັນກໍຕາມ.

ຂ. ສະຖານທີ່ໆມີລູກລະເບີດແຕກຂື້ນທຸກຈຸດ ໃນລະຫວ່າງການປະຕິບັດງານເກັບກູ້ລະເບີດດ້ວຍກົນຈັກ ຈະຕ້ອງມີການກວດກາ ແລະ ບັນທຶກໄວ້ຢ່າງຄັກແນ່.

ຄ. ລູກລະເບີດທຸກໜ່ວຍທີ່ຟົ້ງສະເດັນອອກໃນລະຫວ່າງການປະຕິບັດງານເກັບກູ້ລະເບີດດ້ວຍກົນຈັກ ຈະຕ້ອງໝາຍ ແລະ ບັນທຶກບ່ອນທີ່ລູກລະເບີດຕົກນັ້ນໄວ້.

ງ. ທຸກເຄື່ອງຈັກທີ່ປະຕິບັດງານເກັບກູ້ລະເບີດ ຕ້ອງໄດ້ກວດກາກ່ອນຈະເຄື່ອນຍ້າຍອອກຈາກສະໜາມເກັບກູ້ໄປຍັງສະຖານທີ່ບໍລິຫານ ທັງນີ້ກໍເພື່ອຮັບປະກັນບໍ່ໃຫ້ມີລະເບີດຄ້າງຢູ່ນຳ ພາກສ່ວນປະຕິບັດງານ ຫຼື ສ່ວນປະກອບທີ່ມີການເຄື່ອນໄຫວຂອງເຄື່ອງຈັກ. ໃນເວລາກວດກາໃຫ້ປະຕິບັດດັ່ງນີ້:

(1) ວິທີການໃນການຂຸດຊອກຫາຈະຕ້ອງໄດ້ນຳໃຊ້ ເພື່ອກວດຫາລະເບີດໃນຂີ້ດິນ ແລະ ຂີ້ຕົມທີ່ຕິດມານຳເຄື່ອງຈັກ.

(2) ໄລຍະຄວາມປອດໄພສຳລັບອັນຕະລາຍຈາກ ລບຕ ທີ່ໄດ້ປະເມີນໃນສະໜາມປະຕິບັດງານເກັບກູ້ຕ້ອງໄດ້ນຳໃຊ້ປະຕິບັດ. ໄລຍະຄວາມປອດໄພນີ້ຈະໄດ້ພິຈາລະນາກຳນົດໂດຍຜູ້ຊີ້ນຳກວດກາການເກັບກູ້ລະເບີດບໍ່ທັນແຕກຕົກຄ້າງ.

(3) ຖ້າພົບວັດຖຸທີ່ສົງໃສວ່າ ມີອັນຕະລາຍທີ່ຕິດມານຳກົນຈັກ ແມ່ນໃຫ້ໃຊ້ວິທີດຶງເອົາວັດຖຸນັ້ນອອກຈາກເຄື່ອງຈັກ ແລ້ວທຳລາຍກັບທີ່ໂລດ. ຖ້າຈຳເປັນ ກໍໃຫ້ຂໍການຊ່ວຍເຫຼືອໃນການທຳລາຍລະເບີດທີ່ພົບນັ້ນ.

ຈ. ໃນລະຫວ່າງການປະຕິບັດງານເກັບກູ້ ລບຕ ດ້ວຍກົນຈັກ ຫາກມີເນື້ອທີ່ໃດໜຶ່ງຢູ່ໃນສະຖານທີ່ຈະທຳການເກັບກູ້ ທີ່ບໍ່ສາມາດເກັບກູ້ໄດ້ດ້ວຍກົນຈັກ ຕ້ອງໄດ້ທຳການ ເກັບກູ້ດ້ວຍອຸປະກອນທີ່ປະຕິບັດດ້ວຍມື. ການເກັບກູ້ລະເບີດດ້ວຍກົນຈັກອາດຈະເຮັດໃຫ້ເນື້ອທີ່ອື່ນ ກາຍເປັນພື້ນທີ່ໆມີລະເບີດຕົກຄ້າງຂະຫຍາຍອອກ ຍ້ອນການຍູ້ດິນອອກຈາກສະໜາມເກັບກູ້ ແລະ ການຄາດຊະພື້ນທີ່ດັ່ງກ່າວ ລວມທັງການຕົກຄ້າງໃສ່ພື້ນທີ່ດິນທີ່ຢູ່ນອກສະໜາມເກັບກູ້ ກໍຈຳເປັນຕ້ອງເກັບກູ້ດ້ວຍອຸປະກອນທີ່ປະຕິບັດດ້ວຍມືນຳອີກ.

ສ. ໃນລະຫວ່າງການປະຕິບັດງານເກັບກູ້ລະເບີດດ້ວຍກົນຈັກ, ຈຳນວນລູກລະເບີດທີ່ເກັບລວບລວມໄດ້ ບໍ່ວ່າຈະໄດ້ຈາກການຮ່ອນ, ການນຳໃຊ້ແມ່ເຫຼັກ ຫຼື ກຳມະວິທີທາງກົນຈັກອື່ນໆ ຈະຕ້ອງເກັບມ້ຽນໄວ້ໃນສະ

ຖານທີ່ໆກຳນົດກະກຽມໄວ້ ແລະ ໄດ້ກວດກາແລ້ວວ່າບໍ່ມີສິ່ງທີ່ມີອັນຕະລາຍ. ຊິ້ນສ່ວນປະກອບຂອງລະເບີດທີ່ມີອັນຕະລາຍຈະຕ້ອງຖືກທຳລາຍ ໂດຍໃຫ້ສອດຄ່ອງກັບຂໍ້ກຳນົດຂອງ **ບົດທີ 8 ຂອງມາດຕະຖານແຫ່ງຊາດ ວ່າດ້ວຍ "ການທຳລາຍລະເບີດ".**

ຊ. ການຈັດວາງສິ່ງເສດເຫຼືອທີ່ອາດຈະຕົກຄ້າງ ຫຼື ປະປົນດ້ວຍລະເບີດໃນເນື້ອທີ່ໆກຳນົດໄວ້ ຕ້ອງປະຕິບັດຢ່າງປອດໄພ ແລະ ດ້ວຍວິທີການທີ່ເໝາະສົມ ເພື່ອສະດວກໃນການກວດກາ ແລະ ກຳນະວິທີໃນການກວດກາວັດສະດຸດ້ວຍເຄື່ອງຈັກໃນເວລາຕໍ່ມາ. ໃນການຈັດວາງວັດສະດຸທີ່ມີລະເບີດເຈືອປົນຢູ່ພື້ນທີ່ສຳລັບເກັບທ້ອນໂຮມນັ້ນ ຜູ້ຄວບຄຸມເຄື່ອງຈັກຕ້ອງຄິດໄລ່ໃຫ້ມີບ່ອນວ່າງພຽງພໍ ເພື່ອບໍ່ໃຫ້ເຄື່ອງຈັກເຄື່ອນໄຫວໄປຢຽບວັດສະດຸທີ່ມີລະເບີດເຈືອປົນທີ່ທ້ອນໂຮມໄວ້.

ຍ. ກວດກາເບິ່ງວັດສະດຸດ້ວຍຕາເປົ່າພາຍຫຼັງທີ່ເຄື່ອນຍ້າຍອອກຈາກພື້ນທີ່ໆມີລະເບີດຕົກຄ້າງ ເປັນຕົ້ນແມ່ນສາຍລວດຕິດພັນຢັ່ງຢາຍຢູ່ ແລະ ກ່ອນຈະຖອກມ້ຽນຢູ່ສະຖານທີ່ທ້ອນໂຮມ ເພື່ອຮັບປະກັນບໍ່ໃຫ້ມີລະເບີດຕິດປົນມານຳ. ໃນເວລາປະຕິບັດການກວດກາເຄື່ອງຈັກຈະຕ້ອງຈອດໄວ້ກັບທີ່.

## 7.5. ການກະກຽມພື້ນທີ່ດິນ

ການກະກຽມພື້ນທີ່ດິນດ້ວຍກົນຈັກ ກໍ່ເພື່ອສະໜັບສະໜູນໃຫ້ແກ່ການປະຕິບັດງານເກັບກູ້ລະເບີດດ້ວຍມື, ການເກັບກູ້ດ້ວຍໝາ ຫຼື ການເກັບກູ້ລະເບີດດ້ວຍກົນຈັກ ເພື່ອໃຫ້ບັນລຸໄດ້ຕາມຄວາມຕ້ອງການຂອງການເກັບກູ້.

## 7.6. ການເກັບກູ້ລະເບີດບໍ່ທັນແຕກດ້ວຍກົນຈັກ

ໃນການປະຕິບັດການເກັບກູ້ ລບຕ ດວ້ຍກົນຈັກ ຕ້ອງປະຕິບັດຕາມກົດລະບຽບດັ່ງລຸ່ມນີ້:

ກ. ເຄື່ອງຈັກທີ່ຈະນຳໃຊ້ເຂົ້າໃນການເກັບກູ້ລະເບີດດ້ວຍກົນຈັກ ຕ້ອງແມ່ນເຄື່ອງຈັກທີ່ມີການປະເມີນແລ້ວວ່າສາມາດຕ້ານທານໄດ້ກັບຄວາມອັນຕະລາຍຈາກລະເບີດທີ່ອາດຈະມີຂຶ້ນ.

ຂ. ການເກັບກູ້ລະເບີດດ້ວຍກົນຈັກຈະຕ້ອງເລີ່ມປະຕິບັດຢ່າງໜ້ອຍ 05 ແມັດ ກ່ອນທີ່ຈະເຖິງຂອບເຂດເນື້ອທີ່ໆຈະເກັບກູ້ ເວັ້ນເສຍແຕ່ວ່າເນື້ອທີ່ດິນນັ້ນມີສິ່ງກີດຂວາງຈຶ່ງບໍ່ສາມາດປະຕິບັດໄດ້ຄືດັ່ງກ່າວ.

ຄ. ເມື່ອມີຄວາມຈຳເປັນຈະຕ້ອງມີເສັ້ນທາງຮ່ອມຜ່ານສະໜາມເກັບກູ້ລະເບີດ ເສັ້ນທາງນີ້ຈະຕ້ອງຕັ້ງສາກກັບທາງໃຫຍ່ເປັນມູມ 90 ອົງສາ.

ງ. ເວລາເກັບກູ້ຕ້ອງເກັບກູ້ເລື່ອມກັນຢ່າງຕ່ຳ 0.5 ແມັດ ລະຫວ່າງຊ່ອງເກັບກູ້ທີ່ຢູ່ຕິດກັນ.

## 7.7. ມາດຕະການປະຕິບັດຕໍ່ກັບຄວາມຜິດພາດຂອງກົນຈັກ

ຈະຕ້ອງເອົາໃຈໃສ່ສ້າງລະບຽບການສະເພາະ ເພື່ອກອບກູ້ເອົາອຸປະກອນໃນກໍລະນີມີຄວາມຜິດພາດກ່ຽວກັບກົນຈັກໃນພື້ນທີ່ໆມີລະເບີດບໍ່ທັນແຕກຕົກຄ້າງ. ລະບຽບປະຕິບັດໃນກໍລະນີດັ່ງກ່າວອາດຈຳເປັນຕ້ອງແຍກສະເພາະສຳລັບແຕ່ລະປະເພດຂອງເຄື່ອງຈັກທີ່ຕ່າງກັນ. ລະບຽບທັງໝົດທີ່ຈະລວມເຂົ້າໃນຂໍ້ກຳນົດນີ້ມີຄື:

ກ. ການນຳເອົາຜູ້ບັນຊາເຄື່ອງຈັກ ອອກມາຈາກເຄື່ອງຈັກຢ່າງປອດໄພ ແລະ ໄວເທົ່າທີ່ຈະໄວໄດ້.

ຂ. ການກອບກູ້ເອົາເຄື່ອງຈັກອອກມາຢ່າງປອດໄພໃນເວລາທີ່ສົມເຫດສົມຜົນ.

ຄ. ການປະເມີນຄວາມສ່ຽງ ກ່ອນທີ່ຈະມີການເລີ່ມຕົ້ນກອບກູ້ເອົາເຄື່ອງຈັກອອກມາ.

## 8. ການເວນຍາມ

ຖ້າການຄວບຄຸມພື້ນທີ່ອັນຕະລາຍໃນລະຫວ່າງການເກັບກູ້ລະເບີດດ້ວຍກົນຈັກຫາກບໍ່ສາມາດ ຮັກສາໄດ້ດ້ວຍວິທີການອື່ນ ກໍຕ້ອງຈັດໃຫ້ມີຄົນເວນຍາມ. ຄົນຍາມຈະຕ້ອງຈັດວາງໄວ້ຢູ່ທຸກເສັ້ນທາງທີ່ອາດຈະເຂົ້າໄປ ເຖິງພື້ນທີ່ອັນຕະລາຍໄດ້. ຄົນຍາມຈະຕ້ອງຫ້າມປະຊາຊົນບໍ່ໃຫ້ເຂົ້າ ຫຼື ແຈ້ງໃຫ້ຜູ້ຊີ້ນຳການເກັບກູ້ຊາບ ຖ້າມີປະຊາຊົນລ່ວງລ້ຳເຂົ້າໄປໃນພື້ນທີ່ອັນຕະລາຍ.

ຈຸດເວນຍາມຈະຕ້ອງຢູ່ນອກພື້ນທີ່ອັນຕະລາຍຂອງການປະຕິບັດງານເກັບກູ້ລະເບີດດ້ວຍກົນຈັກ ຫຼື ຢູ່ໃນສະຖານທີ່ໆມີສິ່ງກຳບັງທີ່ເໝາະສົມ. ຖ້າຈຸດເວນຍາມຫາກຕັ້ງຢູ່ໃນພື້ນທີ່ອັນຕະລາຍທີ່ມີສິ່ງກຳບັງ ແຕ່ຈຸດຍາມຕ້ອງສາມາດມອງເຫັນເສັ້ນທາງເຂົ້າໄປສູ່ພື້ນທີ່ອັນຕະລາຍໄດ້ດີ. ຄົນເວນຍາມຈະຕ້ອງມີເຄື່ອງສື່ສານເພື່ອຕິດຕໍ່ກັບຜູ້ຊີ້ນຳການເກັບກູ້.

## 9. ການປ້ອງກັນຊັບສິນ ແລະ ໂຄງລ່າງພື້ນຖານຕ່າງໆ

ໃນການວາງແຜນສຳລັບການເກັບກູ້ລະເບີດດ້ວຍກົນຈັກ ຈະຕ້ອງຄຳນຶງເຖິງຄວາມເສຍຫາຍທີ່ອາດຈະເກີດແກ່ຊັບສິນ ຫຼື ໂຄງລ່າງພື້ນຖານໃດໜຶ່ງ. ຖ້າມີຄວາມເປັນໄປໄດ້ທີ່ຊັບສິນ ຫຼື ໂຄງລ່າງພື້ນຖານຈະໄດ້ຮັບຄວາມເສຍຫາຍຈາກການປະຕິບັດງານ ກໍ່ຕ້ອງປຶກສາຫາລືກັບເຈົ້າຂອງດິນ ຫຼື ອຳນາດການປົກຄອງທ້ອງຖິ່ນກ່ຽວກັບການປະຕິບັດງານ. ຖ້າຈຳເປັນກໍຕ້ອງໃຫ້ຄຳແນະນຳວິທີການປະຕິບັດເພື່ອຫຼຸດຜ່ອນຄວາມເສຍຫາຍໃຫ້ແກ່ເຈົ້າຂອງຊັບສິນ ທີ່ຢູ່ໃກ້ກັບສະໜາມປະຕິບັດການເກັບກູ້.

## 10. ການທຳລາຍ ລບຕ

ລູກລະເບີດທຸກໜ່ວຍທີ່ພົບເຫັນໃນລະຫວ່າງການປະຕິບັດງານເກັບກູ້ລະເບີດດ້ວຍກົນຈັກຈະຕ້ອງທຳລາຍໂດຍໃຫ້ສອດຄ່ອງກັບຂໍ້ກຳນົດທີ່ລະບຸໄວ້ໃນ **ບົດທີ 8 ຂອງມາດຕະຖານແຫ່ງຊາດ ວ່າດ້ວຍ 'ການທຳລາຍລະເບີດ'**. ຫາກສາມາດປະຕິບັດໄດ້ລູກລະເບີດທີ່ພົບເຫັນຄວນຈະທຳລາຍໃນແຕ່ລະວັນຕາມຄວາມເໝາະສົມ. ລູກລະເບີດທີ່ພົບເຫັນໃນລະຫວ່າງການປະຕິບັດງານເກັບກູ້ດ້ວຍກົນຈັກຕ້ອງຖືກທຳລາຍໃຫ້ໝົດ.

ລູກລະເບີດ ຫຼື ຊິ້ນສ່ວນປະກອບຂອງລະເບີດທີ່ຟັ່ງສະເດັນອອກ ໃນລະຫວ່າງການປະຕິບັດງານເກັບກູ້ລະເບີດດ້ວຍກົນຈັກຈະຕ້ອງຖືກທຳລາຍທັນທີ.

ເມື່ອລະເບີດທີ່ພົບເຫັນຫາກເກີນລະດັບອະນຸຍາດຂອງຜູ້ຊີ້ນຳການເກັບກູ້, ຜູ້ຊີ້ນຳການເກັບກູ້ຕ້ອງແຈ້ງໃຫ້ເຈົ້າໜ້າທີ່ຜູ້ຈັດສັນໜ້າວຽກຊາບ ເພື່ອຂໍການຊ່ວຍເຫຼືອໃນການທຳລາຍ.

## 11. ມາດຕະການປ້ອງກັນ ແລະ ການປະຕິບັດໃນເວລາເກີດໄຟໄໝ້ເຄື່ອງຈັກ

ເຄື່ອງຈັກບາງເຄື່ອງອາດຈະຕິດຕັ້ງອຸປະກອນມອດໄຟອັດຕະໂນມັດໄວ້ພ້ອມ ແຕ່ນອກຈາກອຸປະກອນທີ່ຕິດຕັ້ງມາກັບເຄື່ອງຈັກແລ້ວ ຢ່າງໜ້ອຍສຸດເຄື່ອງຈັກແຕ່ລະເຄື່ອງຕ້ອງມີບັ້ງມອດໄຟຂະໜາດ 02 ກິໂລ ທີ່ສາມາດໃຊ້ງານໄດ້ໃຫ້ມີໄວ້ໃນກໍລະນີດັ່ງນີ້:

ກ. ສໍາລັບເຄື່ອງຈັກທີ່ປະຕິບັດງານດ້ວຍເຄື່ອງຄວບຄຸມໄລຍະໄກ ຜູ້ຄວບຄຸມເຄື່ອງຈັກຈະຕ້ອງມີບັ້ງມອດໄຟໄວ້ນໍາຕົນເອງ.

ຂ. ສໍາລັບເຄື່ອງຈັກທີ່ມີຜູ້ປະຕິບັດງານຢູ່ພາຍໃນຫ້ອງຂັບມີການປ້ອງກັນ. ບັ້ງມອດໄຟຈະຕ້ອງຕິດຕັ້ງໄວ້ໃຫ້ແໜ້ນຢູ່ໃນຫ້ອງຂັບຂອງເຄື່ອງຈັກ.

ຫ້າມບໍ່ໃຫ້ເອົາບັ້ງມອດໄຟໄປຕິດຕັ້ງ ແລະ ໃສ່ກະແຈໄວ້ຢູ່ຂ້າງນອກຂອງເຄື່ອງຈັກ.

ອົງການເກັບກູ້ລະເບີດດວ້ຍການນໍາໃຊ້ເຄື່ອງຈັກຈະຕ້ອງສ້າງ ແລະ ພັດທະນາລະບຽບການເພື່ອນໍາໃຊ້ປະຕິບັດໃນກໍລະນີເກີດໄຟໄໝ້ເຄື່ອງຈັກ. ລະບຽບການດັ່ງກ່າວຈະຕ້ອງກວມເອົາ:

ກ. ມາດຕະການສະເພາະໜ້າທີ່ຜູ້ບັນຊາເຄື່ອງຈັກຕ້ອງປະຕິບັດ. ມາດຕະການນີ້ແມ່ນຂຶ້ນຢູ່ກັບວ່າເຄື່ອງຈັກມີການຄວບຄຸມໄລຍະໄກ ຫຼື ບໍ່.

ຂ. ການປະຕິບັດຂອງພະນັກງານຄົນອື່ນໆ ທີ່ຢູ່ໃນສະໜາມເກັບກູ້ລະເບີດ.

ຄ. ບ່ອນໃສ່ນໍ້າມັນໃຫ້ເຄື່ອງຈັກທຸກບ່ອນ ຕ້ອງໃຫ້ມີອຸປະກອນມອດໄຟ.

## 12. ການບໍາລຸງຮັກສາ ແລະ ການສ້ອມແປງ

ອົງການເກັບກູ້ລະເບີດທີ່ນໍາໃຊ້ເຄື່ອງຈັກເຂົ້າໃນການປະຕິບັດງານຢູ່ ສປປ ລາວ ຕ້ອງຮັບປະກັນວ່າ:

ກ. ເຄື່ອງຈັກຈະຕ້ອງໄດ້ຮັບການບໍາລຸງຮັກສາ ແລະ ຮັບບໍລິການສ້ອມແປງໃຫ້ສອດຄ່ອງກັບຄໍາແນະນໍາຂອງຜູ້ຜະລິດ. ການບໍາລຸງຮັກສາ ແລະ ການສ້ອມແປງຈະຖືກປະຕິບັດໂດຍອົງການ ຫຼື ພະນັກງານຜູ້ທີ່ມີຄຸນວຸດທິ ແລະ ໄດ້ຮັບອະນຸຍາດເທົ່ານັ້ນ.

ຂ. ການກວດກາລະບົບເຄື່ອງຈັກປະຈໍາແຕ່ລະວັນ ສິ່ງທີ່ຈະຕ້ອງກວດກາມີຄື ເຄື່ອງຢຽບລະເບີດ, ເຄື່ອງຕີລະເບີດ ແລະ ເຄື່ອງຄາດ. ຖ້າສ່ວນປະກອບທີ່ສໍາຄັນຊຶ່ງມີຜົນຕໍ່ປະສິດທິພາບຂອງການປະຕິບັດງານຂອງເຄື່ອງຈັກຖືກເປເພ ຫຼື ເສຍຫາຍ ສ່ວນປະກອບເຫຼົ່ານີ້ຈະຕ້ອງໄດ້ຮັບການສ້ອມແປງ ແລະ ປ່ຽນຖ່າຍກ່ອນທີ່ຈະສືບຕໍ່ປະຕິບັດງານຕໍ່ໄປ.

ຄ. ການກວດກາປົກກະຕິຂອງລັກສະນະຄວາມປອດໄພຕ່າງໆຂອງເຄື່ອງຈັກ ຕ້ອງປະຕິບັດຢ່າງເປັນປະຈໍາ ແລະ ຖ້າຫາກກວດພົບຄວາມເສຍຫາຍ ກໍ່ຕ້ອງມີການສ້ອມແປງຢ່າງຄັກແນ່ ກ່ອນຈະສືບຕໍ່ປະຕິບັດວຽກງານຕໍ່ໄປ. ຄວາມເສຍຫາຍດັ່ງກ່າວອາດລວມມີ ຮອຍແຕກ ຫຼື ການແຕກຫັກຂອງແຜ່ນໂລຫະຫຸ້ມປ້ອງກັນ (ເຄື່ອງປ້ອງກັນລະເບີດ), ແຜ່ນແກ້ວປ້ອງກັນອັນຕະລາຍ ຫຼື ກຽວຂັນໃນຫ້ອງຂັບມາຍອອກ.

ງ. ເວລາໃດກໍຕາມທີ່ເຄື່ອງຈັກຖືກລະເບີດ ຊຶ່ງອາດຈະເປັນສາເຫດໃຫ້ໂຄງຮ່າງເຄື່ອງຈັກເສຍຫາຍ ຫຼື ມີຄວາມເສຍຫາຍຮ້າຍແຮງຕໍ່ສ່ວນປະກອບທີ່ສຳຄັນ. ເມື່ອເປັນເຊັ່ນນັ້ນ ເຄື່ອງຈັກນັ້ນຈຳເປັນຕ້ອງຖອນອອກຈາກສະຖານທີ່ໆມີລະເບີດຕົກຄ້າງໂດຍທັນທີ ແລ້ວກວດກາເຄື່ອງຈັກດັ່ງກ່າວຢ່າງລະອຽດ. ຖ້າເຫັນວ່າຄວາມເສຍຫາຍຂອງເຄື່ອງຈັກອາດຈະເຮັດໃຫ້ຜູ້ປະຕິບັດງານສ່ຽງອັນຕະລາຍຖ້າຖືກລະເບີດຊ້ຳອີກ ເຄື່ອງຈັກນັ້ນຈະບໍ່ອະນຸຍາດໃຫ້ກັບຄືນໄປປະຕິບັດວຽກງານອີກ ຈົນກວ່າຄວາມເສຍຫາຍຈະຖືກສ້ອມແປງໃຫ້ດີກ່ອນ.

ການສ້ອມແປງ, ບຳລຸງຮັກສາ ແລະ ສອມແຊມເຄື່ອງຈັກ ຈະຕ້ອງປະຕິບັດໃນເງື່ອນໄຂສະພາບແວດລ້ອມທີ່ເໝາະສົມ ຖືກຕ້ອງກັບຂໍ້ກຳນົດທີ່ລະບຸໃນ **ບົດທີ 21 ຂອງມາດຕະຖານແຫ່ງຊາດ ວ່າດ້ວຍ 'ການບໍລິຫານຄຸ້ມຄອງສະພາບແວດລ້ອມ'.**

ເຄື່ອງຈັກຈະຕ້ອງປະຕິບັດງານໃນສະໜາມເກັບກູ້ລະເບີດທີ່ໄດ້ກຳນົດໃຫ້ເທົ່ານັ້ນ ເຊັ່ນ ພາຍໃນບໍລິເວນສະຖານທີ່ພັກເຊົາຊົ່ວຄາວ ຫຼື ສະຖານທີ່ໃດໜຶ່ງທີ່ ຄຄຊ ໄດ້ອະນຸຍາດເພື່ອຈຸດປະສົງສຳລັບນຳໃຊ້ ໃນການຝຶກອົບຮົມ ຫຼື ທົດສອບ.

ຫ້າມບໍ່ໃຫ້ຂັບເຄື່ອງຈັກປະເພດຕີນໂສ້ຢູ່ເທິງຖະໜົນລາດຢາງເດັດຂາດ. ຖ້າມີຄວາມຈຳເປັນຕ້ອງເອົາເຄື່ອງຈັກຕີນໂສ້ຂ້າມຖະໜົນລາດຢາງ ຕ້ອງເອົາແປ້ນມາປູ ຫຼື ໄມ້ມາຮອງກ່ອນຈຶ່ງຂັບຂ້າມ, ທັງນີ້ກໍເພື່ອປ້ອງກັນບໍ່ໃຫ້ເກີດຄວາມເສຍຫາຍແກ່ຖະໜົນ.

## 13. ບົດບັນທຶກການປະຕິບັດງານຂອງກົນຈັກ

ອີງການເກັບກູ້ທີ່ຈະນຳໃຊ້ກົນຈັກເຂົ້າໃນການເກັບກູ້ ລບຕ ຄວນເອົາໃຈໃສ່ຮັກສາບົດບັນທຶກການປະຕິບັດງານຂອງກົນຈັກ ແລະ ການເກັບກູ້ທີ່ປະຕິບັດພາຍຫຼັງການປະຕິບັດງານຂອງກົນຈັກ ເພື່ອສ້າງເປັນຖານຂໍ້ມູນດ້ານສະຖິຕິທີ່ສາມາດນຳໃຊ້ເປັນບ່ອນອີງໃນການຕັດສິນກ່ຽວກັບການປະຕິບັດງານ. ຂໍ້ມູນດັ່ງກ່າວຄວນລວມເອົາທັງຂໍ້ມູນກ່ຽວກັບການປະຕິບັດງານ ແລະ ຂໍ້ມູນທີ່ບໍ່ກ່ຽວກັບການປະຕິບັດງານນຳ.

ຂໍ້ມູນກ່ຽວກັບການປະຕິບັດງານ ຄວນປະກອບມີດັ່ງນີ້:

ກ. ປະເພດຂອງການປະຕິບັດງານ ທີ່ໄດ້ຈັດຕັ້ງປະຕິບັດ.

ຂ. ເງື່ອນໄຂຂອງພື້ນທີ່ດິນ, ພືດພັນ, ຄວາມລາດຊັນ, ບໍລິມາດຂອງຄວາມຊຸ່ມຊື່ນ ແລະ ອື່ນໆ.

ຄ. ສະພາບດິນຟ້າອາກາດ.

ງ. ຊົ່ວໂມງປະຕິບັດວຽກ.

ຈ. ພື້ນທີ່ດິນທີ່ໄດ້ກະກຽມ ຫຼື ໄດ້ເກັບກູ້ແລ້ວ.

ສ. ລະເບີດທີ່ພົບເຫັນ.

ຊ. ຜົນກະທົບຂອງເຄື່ອງຈັກທີ່ມີຕໍ່ລະເບີດ, ຖ້າມີ.

ນ. ຜົນກະທົບຂອງລະເບີດທີ່ມີຕໍ່ເຄື່ອງຈັກ, ຖ້າມີ.

ບ. ການເກັບກູ້ພາຍຫຼັງການປະຕິບັດງານຂອງກົນຈັກ.

ດ. ຄຸນນະພາບຂອງການກະກຽມພື້ນທີ່ດິນໃຫ້ກັບການປະຕິບັດການເກັບກູ້ທີ່ຈະປະຕິບັດໃນພາຍຫຼັງ.

ຕ. ຊິ້ນສ່ວນເສດເຫຼືອທີ່ເປັນອັນຕະລາຍທີ່ກວດພົບໂດຍການເກັບກູ້ທີ່ປະຕິບັດພາຍຫຼັງການປະຕິບັດງານດ້ວຍກົນຈັກ.

ຖ. ຄວາມເລິກຂອງການເກັບກູ້ທີ່ປະຕິບັດໄດ້, ຖ້າມີ.

ຂໍ້ມູນທີ່ບໍ່ກ່ຽວກັບການປະຕິບັດງານ ຄວນລວມເອົາລາຍລະອຽດການເສຍເວລາຂອງການປະຕິບັດງານຍ້ອນກົນຈັກເປ່ເພ, ການຂົນສົ່ງລະຫວ່າງສະໜາມເກັບກູ້, ຄວາມຊັກຊ້າໃນການສະໜອງດ້ານພາລາທິການ, ການປະສານງານທີ່ບໍ່ສອດຄ່ອງ ແລະ ອື່ນໆເຂົ້າໃນບົດບັນທຶກນຳ.

## 14. ຂໍ້ກຳນົດອື່ນໆ

ຖ້າສາມາດປະຕິບັດໄດ້ ຂໍ້ກຳນົດກ່ຽວກັບບົດລາຍງານຄວາມຄືບໜ້າ, ການສຳຫຼວດຜົນສຳເລັດຂັ້ນສຸດທ້າຍ, ເອກະສານກ່ຽວກັບສະໜາມປະຕິບັດງານເກັບກູ້, ຜູ້ຢ້ຽມຢາມ ແລະ ການຕິດຕໍ່ປະສານງານກັບຊຸມຊົນ ດັ່ງທີ່ໄດ້ກຳນົດໄວ້ໃນ **ບົດທີ 7 ຂອງມາດຕະຖານແຫ່ງຊາດ ວ່າດ້ວຍ "ການເກັບກູ້ລະເບີດບໍ່ທັນ"** ແມ່ນໃຫ້ກັບໃນການເກັບກູ້ລະເບີດໂດຍການນຳໃຊ້ກົນຈັກດ້ວຍ.